# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

### ວັນອາທິດ ທີ 22 ເມສາ 2007 ( 04-22-2007 )

## ຄວາມຮັກທີ່ເຊື່ອຟັງ:

**ຂໍ້ພຣະຄັມພີໃນບົດຮຽນ:** ໂຢຮັນ 13:34-35; 14:15, 21-24; 15:9-16

**ຄຳຖາມແຫ່ງຊີວິດ:** ເປັນຫຍັງຮັກພຣະເຢຊູແລ້ວກໍຍັງບໍ່ພຽງພໍ?

**ຄວາມຈິງໃນພຣະຄັມພີ:** ຜູ້ທີ່ຮັກພຣະເຢຊູເຮັດໃນສິ່ງທີ່ພຣະອົງບອກໃຫ້ເຂົາເຮັດ ແລະເກີດຜົນທີ່ຄົງຢູ່ຕລອດໄປ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ແມ່ນເພື່ອຊ່ອຍທ່ານໃຫ້ຄົ້ນພົບສິ່ງທີ່ພຣະເຢຊູຕ້ອງການຈາກພວກເຮົາໂດຍ:

- ໃຫ້ເຂົ້າໃຈວ່າ ການທີ່ສະແດງຄວາມຮັກ ແລະເຊື່ອຟັງພຣະເຢຊູເປັນສິ່ງໄປນຳກັນ ແລະ
- ໃຫ້ຕັດສິນໃຈວ່າ ການສະແດງຄວາມຮັກ ແລະເຊື່ອຟັງຄຳສັ່ງຂອງພຣະເຢຊູ ແລະເກີດຜົນທີ່ຄົງຢູ່ຕລອດໄປ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**ແນະນຳ:** ຂຽນຄຳຖາມນີ້ໃສ່ກະດານ:

**ຄຳຖາມ:** 1. ຄົນທີ່ຮັກພຣະເຢຊູໄດ້ເຮັດຫຍັງຕໍ່ພຣະອົງ?
2. ໃຫ້ນັກຮຽນຂຽນຄຳຕອບທີ່ຄົນໄດ້ເຮັດຕໍ່ພຣະເຢຊູນັ້ນໃສ່ກ້ອງຄຳຖາມນັ້ນ.

**ອະທິບາຍ:** ໃນບົດຮຽນມື້ນີ້ພວກເຮົາຈະໄດ້ຮຽນວ່າ ພຣະເຢຊູໄດ້ຊົງຕອບຄຳຖາມນັ້ນ ແລະພວກເຮົາເປັນຜູ້ມີຄວາມພາກພູມໃຈທີ່ໄດ້ຮູ້ວ່າພຣະພຣະອົງໄດ້ຊົງເວົ້າເຣື່ອງຫຍັງ.

**ຄຳຖາມອີກອັນນຶ່ງຖາມວ່າ:** ພຣະເຢຊູຕ້ອງການຫຍັງແດ່ຈາກພວກເຮົາ?

## 1. ຈົ່ງຮັກຊຶ່ງກັນ ແລະກັນ: ( ໂຢຮັນ 13:34-35)

1) ຂໍໃຫ້ນັກຮຽນອາສາສມັກອ່ານ ໂຢຮັນ 13:34,35

2) **ຄຳຖາມ:** 1. ພວກເຮົາຈະຮັກຊຶ່ງກັນ ແລະກັນໄດ້ຢ່າງໃດ? ( ເໝືອນພຣະເຢຊູຮັກພວກເຮົານັ້ນເອງ)

3) **ອະທິບາຍ:** ໃຫ້ຂຽນຄຳວ່າ: " **ພຣະເຢຊູຮັກຂ້າພະເຈົ້າຢ່າງໃດ** " ໃສ່ກະດານ. ໃຫ້ນັກຮຽນໄປຫາເພື່ອນບ້ານຂອງເຂົາເຈົ້າ ແລະເວົ້າໃຫ້ເຂົາຟັງໃນຫົນທາງທີ່ພຣະເຢຊູຮັກເຂົາຢ່າງໃດ ແລະພຣະອົງຊົງສັ່ງເຂົາໃຫ້ຮັກຊຶ່ງກັນ ແລະກັນຕາມແບບຢ່າງຂອງພຣະອົງ.

4. **ຄຳຖາມ:** ໃນເມື່ອຜູ້ທີ່ເຊື່ອສະແດງຄວາມຮັກຊຶ່ງກັນ ແລະກັນດ້ວຍຄວາມຈິງໃຈແລ້ວໂລກຈະເຫັນວ່າພວກເຮົາເປັນໃຜ? ( ທຸກຄົນຈະຮູ້ວ່າພວກເຮົາເປັນສາວົກຂອງພຣະອົງ )

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ໂຢຮັນ 13:34-35

1. ບັນຍັດໃໝ່ທີ່ພຣະເຢຊູເອົາໃຫ້ສາວົກຂອງພຣະອົງນັ້ນແມ່ນຫຍັງ?
2. ເປັນຫຍັງພຣະເຢຊູຈຶ່ງອອກຄຳສັ່ງ ແທນ ຄຳສເນີ ໃຫ້ຜູ້ທີ່ເຊື່ອຮັກຊຶ່ງກັນ ແລະກັນ?
3. ທີ່ພວກເຮົາຮັກຊຶ່ງກັນແລະກັນນັ້ນ ເປັນການຖວາຍກຽດແດ່ພຣະເຈົ້າຢ່າງໃດ?

## 2. ຮັກສາພຣະບັນຍັດ: ( ໂຢຮັນ 14:15, 21-24)

1) ຂໍໃຫ້ອາສາສມັກອ່ານພຣະທັມ ໂຢຮັນ 14:15-24

2) **ອະທິບາຍ:** ສົນທະນາກັນເຣື່ອງຄວາມສຳຄັນຂອງການຮັກສາພຣະບັນຍັດຂອງພຣະເຈົ້າ, ຊຶ່ງພຣະເຢຊູຊົງໃຫ້ແກ່ຜູ້ທີ່ຮັກ ແລະຕິດຕາມພຣະອົງໂດຍ: ການຊົງສະຖິດຢູ່ກັບເຂົາ.

3) ປຽບທຽບຂໍ້ອ້າງອີງຂ້າງລຸ່ມນີ້ຈາກພຣະທັມ ມັດທາຍ 28:18-20; ມາຣະໂກ 12:31; ລູກາ 6:27 ໂຢຮັນ 15:4 . ແລ້ວມາຄົ້ນຄວ້າເບິ່ງເຣື່ອງ ຄຳສັ່ງຂອງພຣະເຈົ້າວ່າເປັນຫຍັງຄຳວ່າ " **ຮັກເທົ່າກັບການເຊື່ອຟັງ** " ທຸກຄຳສັ່ງ.

4) ການຮັກພຣະເຈົ້າ ແລະການເຊື່ອຟັງພຣະເຢຊູນັ້ນເປັນຫລັກຖານທີ່ອ້າງອີງວ່າພວກເຮົາຮັກພຣະອົງ- ສອງຢ່າງນີ້ແຍກຈາກກັນບໍ່ໄດ້.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ( ໂຢຮັນ 14:15,21-24 )

1. ພຣະບັນຍັດຂອງພຣະເຢຊູ ແລະການຮັກສາພຣະບັນຍັດນັ້ນມີຄວາມໝາຍຫຍັງແດ່?
2. ຜົນຂອງການເຊື່ອຟັງພຣະຜູ້ເປັນເຈົ້າໃນພຣະທັມໃນບົດຮຽນນີ້ມີຫຍັງແດ່?
3. ການເຊື່ອຟັງພຣະຄຣິດຮັບຮອງວ່າພວກເຮົາຮັກພຣະອົງຢ່າງໃດ?

## 3. ເກີດຜົນທີ່ຄົງຢູ່ຕລອດໄປ: ( ໂຢຮັນ 15:9-16)

1) ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ ໂຢຮັນ 15:9-16

2) **ອະທິບາຍ:** ພຣະເຢຊູເວົ້າວ່າ " ຜູ້ທີ່ເຊື່ອທັງຫລາຍຄວນຈະຕັ້ງໝັ້ນຄົງຢູ່ໃນຄວາມຮັກຂອງພຣະອົງ. ( ດ້ວຍການເຊື່ອຟັງພຣະບັນຍັດຂອງພຣະອົງ )

3) ພຣະເຢຊູໄດ້ຊົງສລຸບການສັ່ງສອນຂອງພຣະອົງໃນເຣື່ອງຄວາມຮັກ, ການເຊື່ອຟັງ ໂດຍການໃຫ້ສາວົກຕັດສິນໃຈການຕັ້ງໝັ້ນຄົງ ແລະຈຸດປະສົງໃນການເກີດຜົນທີ່ຄົງຢູ່ຕລອດໄປ.

4) **ຄຳຖາມ:** (1) ແມ່ນຫຍັງເປັນລູກກຸນແຈໃຫ້ການເກີດຜົນແຫ່ງຈິດວິນຍານຄົງຢູ່ຕລອດໄປ?
(2) ຈະໃຫ້ຄວາມຮັກຂອງພຣະເຢຊູເກີດຜົນຢູ່ຕລອດໄປໄດ້ຢ່າງໃດ?
(3) ພຣະເຢຊູຄຣິດມີພຣະປະສົງໃຫ້ຈິດວິນຍານຂອງທ່ານເກີດຜົນຢ່າງໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ໂຢຮັນ 15:9-16

1. ທ່ານເຫັນດ້ວຍ ຫລື ບໍ່ເຫັນດ້ວຍກັບຂໍ້ທີ່ວ່າ " ຮັກ " ເປັນການສະແດງອອກໂດຍການເສັຽສລະ?
2. ເປັນຫຍັງຜູ້ທີ່ເຊື່ອຈຶ່ງຈຳເປັນຕ້ອງຮັກສາພຣະບັນຍັດຂອງພຣະເຈົ້າໄວ້?
3. ມີເຫດຜົນອັນໃດທີ່ພຣະເຢຊູເວົ້າວ່າ " ໃຫ້ຮັກສາບັນຍັດຂອງພຣະອົງ ແລະຕັ້ງໝັ້ນຄົງຢູ່ໃນຄວາມຮັກໃນພຣະອົງນັ້ນ?
4. ເປັນຫຍັງຈຶ່ງວ່າ ຕັ້ງໝັ້ນຄົງຢູ່ໃນຄວາມຮັກຂອງພຣະເຢຊູຈະພາໃຫ້ເກີດຜົນຢູ່ຕລອດໄປ?

**ສລູບ:**

1. ໃຫ້ນັກຮຽນ ໆ ພຣະຄັມພີລົ້ມຄືນໃນບົດຮຽນອາທິດນີ້
2. ເປັນຫຍັງຮັກພຣະເຢຊູ ແລ້ວຍັງບໍ່ພໍ? ( ເພາະວ່າພວກເຮົາຕ້ອງເຊື່ອຟັງພຣະອົງດ້ວຍ)
3. ໜູນໃຈນັກຮຽນໃຫ້ໃຊ້ເວລາອະທິຖານທູນຂໍໃຫ້ພຣະເຈົ້າເຂົ້າມາໃນຈິດໃຈທຸກ ໆ ຄືນເພື່ອໃຫ້ຮັກ, ໃຫ້ເຊື່ອຟັງໃນພຣະເຢຊູ ແລະໃຫ້ເກີດຜົນຢູ່ຕລອດໄປ.

## ບົດຮຽນພຣະຄັມພີແຫ່ງຄວາມຈິງ:

- ພຣະບິດາຊົງຮັກພຣະບຸດສັນໃດ ພວກເຮົາກໍຄວນຮັກຊຶ່ງກັນ ແລະກັນສັນນັ້ນ
- ພຣະບຸດເຊື່ອຟັງພຣະບິດາສັນໃດ ພວກເຮົາກໍຄວນເຊື່ອຟັງພຣະບຸດສັນນັ້ນ
- ຄວາມຮັກ ການເຊື່ອຟັງພາໃຫ້ເກີດຜົນທີ່ຄົງຢູ່ຕລອດໄປໃນຊີວິດຂອງພວກເຮົາ ສະນັ້ນ, ພວກເຮົາສາມາດພົບກັບຄວາມຊົມຊື່ນຍິນດີ ແລະຄວາມສົມຫວັງຕລອດດ້ວຍການອະທິຖານ.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປ ແລະຮຽບຮຽງໂດຍ JH )